## ພະແນກສຶກສາ ລັດໄອໂອວາ

## *ອາຍຸກະສຽງເປັນຜູ້ໃຫຍ່ - ສະບັບຂອງນັກຮຽນ*

*ຕຸລາ 2015*

## ຄຳຖາມ ແລະ ຄຳຕອບກ່ຽວກັບອາຍຸກະສຽງຄວາມເປັນຜູ້ໃຫຍ່

ນະໂຍບາຍຂອງລັດຖະບານວ່າດ້ວຍການຮັບປະກັນ ໃນການໄດ້ຮັບສິດທິຂອງທ່ານຈະບໍ່ໄດ້ເສຍຄ່າ, ເໝາະສົມກັບການສຶກສາພາກລັດ ເພື່ອຮັບປະກັນວ່າ ທຸກໆສິດທີໄດ້ສອດຄ່ອງ ໂດຍຜ່ານພໍ່ແມ່ຂອງທ່ານໂດຍອີງໃສ່ກົດໝາຍ ໃຫ້ມອບສິດກັບຄືນໃຫ້ທ່ານ ຫຼັງຈາກທ່ານມີອາຍຸກະສຽງ ຮອດ 18 ປີ! ສະແດງຄວາມ ຊົມເຊີຍ!

### ມັນມີຄວາມໝາຍແນວໃດ?

ນີ້ແມ່ນລາຍລະອຽດຕ່າງໆທີ່ສາມາດຊ່ວຍໃຫ້ທ່ານເຂົ້າໃຈກ່ຽວກັບໃຈຄວາມ. ຖ້າທ່ານມີຄຳຖາມເພີ່ມເຕີມ, ທ່ານສາມາດຖາມໝູ່ເພື່ອນ, ຄູອາຈານ, ຫຼື ຄົນອື່ນທີ່ສາມາດຊ່ວຍທ່ານໄດ້.

ອີງຕາມນະໂຍບາຍ ຢູ່ລັດໄອໂອວາ, ທ່ານໄດ້ກາຍເປັນຄົນໜຶ່ງທີ່ສາມາດຮັບຜິດຊອບທຸກສະຖານະການດ້ວຍຕົວທ່ານເອງຢ່າງຖືກຕ້ອງ ໃນເມື່ອທ່ານອາຍຸຮອດ 18 ປີ, ແລະ ທ່ານໄດ້ຮັບສິດທິເຕັມທີທີ່ຈະເປັນພົນລະເມືອງຢູ່ໃນລັດໄອໂອວາ. ນີ້ສາມາດເວົ້າໄດ້ວ່າ "ອາຍຸກະສຽງຄວາມເປັນຜູ້ໃຫຍ່", ນີ້ແມ່ນການຈິນຕະນາການ ເວົ້າເຖິງອາຍຸຂອງທ່ານຫຼັງຈາກຮອດ 18 ປີ. ຖ້າທ່ານແຕ່ງງານກ່ອນຈະທັນ ເຂົ້າໄປຫາ 18 ປີ, ທ່ານກໍ່ຍັງໄດ້ຮັບສິດທິເຫຼົ່ານີ້.

*ນະໂຍບາຍຕໍ່ບຸກຄົນພິການ/ດ້ອຍໂອກາດໃນການສຶກສາ*, ຮຽກວ່າ IDEA, ມັນເປັນນະໂຍບາຍທີ່ຮັບປະກັນໃນທຶນການສຶກສາ ເພື່ອໃຫ້ສອດຄ່ອງ ກັບລຳດັບຄວາມຕ້ອງການໃນການສຶກສາຂອງທ່ານ. IDEA ຈະຄຸ້ມຄອງເດັກອາຍຸໃຫ້ຮອດ 18 ປີ (ຈົ່ງຈື່ໄວ້ວ່າ, 18 ປີຢູ່ໃນ ລັດໄອໂອວາ), ທຸກສິດທິທີ່ພໍ່ແມ່ມອບໄວ້ໃຫ້ IDEA ຖືວ່າມອບກັບຄືນທັງໝົດໃຫ້ນັກຮຽນ.

### ທ່ານມີສິດທິຫຍັງ?

ກ່ອນອື່ນ, ສິດທິຕ່າງໆເຫຼົ່ານີ້ຈະໄດ້ບັນທຶກເຂົ້າໄປໃນກົດໝາຍ ເພື່ອຮັບປະກັນຕໍ່ກັບນັກຮຽນຜູ້ທີ່ພິການ ຫຼື ບໍ່ມີມີໂອກາດໄດ້ເຂົ້າຮຽນ ໃນໂຮງຮຽນຂອງພາກລັດຄືດັ່ງນັກຮຽນທົ່ວໄປໃນປະເທດເຮົາ. ຈົນກ່ວາທ່ານອາຍຸກະສຽງຮອດ 18 ປີ, ພໍ່ແມ່ຈະມອບສິດທິຕ່າງໆກັບຄືນ ໃຫ້ທ່ານ, ເມື່ອອາຍຸຮອດ 18 ປີ ສິດທິຈະຕົກມາເປັນຂອງທ່ານ. ສິດທິເຫຼົ່ານີ້ ເພື່ອຮັບປະກັນວ່າທ່ານໄດ້ຮັບທຶນການສຶກສາພາກລັດຢ່າງ ເໝາະສົມ. ທ່ານຈະເປັນຄົນທີ່ຮັບຜິດຊອບຕໍ່ໂຄງການເພື່ອໃຫ້ແທກເໝາະກັບທຶນການສຶກສາ.

### ແມ່ນຫຍັງເປັນສິດທິ?

ສິດທິມັນແມ່ນພະລັງ ຫຼື ສິດທິມັນເປັນຢ່າງໜຶ່ງທີ່ຖືກຕ້ອງຕາມກົດໝາຍທີ່ຄົນເຮົາໄດ້ຮັບ, ມັນຄືກັນກັບການເຮັດສັນຍາເພື່ອຊື້ສິ່ງຂອງໃດ ໜຶ່ງ ຫຼື ສິດທິໃນການຂັບຂີ່ລົດ. "ສິດ" ໝາຍຄວາມວ່າທ່ານໄດ້ມອບໝາຍພະລັງໃດໜຶ່ງ ຫຼື ສິດທິທີ່ຈະກ້າໄດ້ກ້າເສຍມັນໄປ, ທ່ານສາມາດເສຍ ສິດທິໃນການຂັບຂີ່ ຖ້າວ່າທ່ານຜິດລະບຽບຫຼາຍເທື່ອ ຫຼື ເກີດອຸປະຕິເຫດ ແລະ ໃບຂັບຂີ່ຂອງທ່ານຈະຖືກຍຶດໄປຈາກທ່ານ. ທ່ານຈະເສຍສິດທິໃນການລົງເຊັນສັນຍາ ຖ້າທ່ານໄດ້ເຊັນແລ້ວ ບໍ່ເຮັດຕາມ (ເສຍຄ່າໃຊ້ຈ່າຍ).

ສິດທິມັນຈະມາດ້ວຍຄວາມຮັບຜິດຊອບ. ຖ້າທ່ານໄດ້ຮັບສິດທິໃນການຂັບຂີ່, ທ່ານຕ້ອງໄດ້ຮັບຜິດຊອບໃນການຂັບຂີ່ໃຫ້ປອດໄພ ແລະ ພາຍໃຕ້ໃນກົດລະບຽບຂອງຍານພາຫະນະ

ໄວອາຍຸກະສຽງເຖິງ (ອາຍຸ 18 ປີ), ທ່ານໄດ້ຮັບສິດທິ ໃຫ້ແນ່ໃຈວ່າທ່ານໄດ້ຮັບທຶນການສຶກສາຕາມທີ່ທ່ານຕ້ອງການ. ທ່ານກໍ່ຍັງຕ້ອງ ໄດ້ຮັບຜິດຊອບໃນການນຳໃຊ້ສິດທິຕ່າງໆເຫຼົ່ານັ້ນ ເພື່ອໃຫ້ໝັ້ນໃຈວ່າທ່ານໄດ້ຮັບຜົນປະໂຫຍດຈາກພວກເຂົາ.

### ປະເພດສິດທິ ແລະ ຄວາມຮັບຜິດຊອບຫຍັງທີ່ພວກເຮົາກຳລັງເວົ້າເຖິງແມ່ນຫຍັງ?

ໂດຍພື້ນຖານແລ້ວ, ອີງການ IDEA ໄດ້ວາງໄວ້ສອງປະເພດຂອງສິດທິ: (1) ປະຕິບັດເພື່ອໃຫ້ແນ່ໃຈວ່າ ນັກສຶກສາຜູ້ດ້ອຍໂອກາດ ໄດ້ຮັບໂດຍບໍ່ໄດ້ເສຍຄ່າ, ແທກເໝາະກັບການສຶກສາພາກລັດ, ແລະ (2) ສິດທິເພື່ອປ້ອງກັນຕົວທ່ານ ແລະ ພໍ່ແມ່ຂອງທ່ານບໍ່ໄດ້ເສຍຄ່າ, ເໝາະສົມກັບການສຶກສາພາກລັດ. ເຫຼົ່ານີ້ເຂົາເອີ້ນວ່າການປ້ອງກັນ ຫຼື ການນຳເດີນສິດທິ.

### ແມ່ນຫຍັງບໍ່ໄດ້ເສຍຄ່າ, ເໝາະສົມໃນການສຶກສາພາກລັດ?

*ຄໍາວ່າຟຣີ ຫຼື ບໍ່ເສຍຄ່າ* ໝາຍຄວາມວ່າ ທ່ານບໍ່ໄດ້ເສຍຄ່າ. (ໂຮງຮຽນສາມາດເກັບຄ່າຮຽນ, ຖ້ານັກສຶກສາທຸກຄົນຕ້ອງໄດ້ຈ່າຍ)

*ເໝາະສົມ* ໝາຍຄວາມວ່າ ທຶນການສຶກສາມັນເປັນພື້ນຖານຄວາມຕ້ອງການຂອງທ່ານ, ເຮັດໃຫ້ທ່ານໄດ້ຮັບຜົນປະໂຫຍດ ແລະ ຄວາມເພິ່ງພໍໃຈ, ແລະ ອະນຸຍາດໃຫ້ທ່ານດໍາເນີນໄປຕາມຜົນໄດ້ຮັບທີ່ສໍາຄັນຕໍ່ຕົວທ່ານ

*ການສຶກສາພາກລັດ* ໝາຍຄວາມວ່າ ການອອກແບບການບໍລິການ ເພື່ອຈັດວາງໄປຕາມຄວາມຕ້ອງການຂອງທ່ານເຊັ່ນດຽວກັນ ກັບນັກສຶກສາພິການ ແລະ ຊ່ວຍໃຫ້ທ່ານຮຽນຮູ້ເລື່ອງວິຖີຊີວິດຂອງທ່ານໃນອະນາຄົດ.

ພວກເຮົາເອີ້ນ FAPE (ບໍ່ເສຍຄ່າ ຄວາມເໝາະສົມ ການສຶກສາພາກລັດ).

## ແມ່ນຫຍັງເປັນສິດທີລວມທັງ FAPE ?

ມັນມີສິດທິຫຼາຍຢ່າງ, ມີຫຼາຍຊ່ອງທາງທີ່ສາມາດເຂົ້າໄປ. ສິດທິເຫຼົ່ານີ້ມັນໄດ້ອະທິບາຍລາຍລະອຽດຢູ່ໃນປຶ້ມວ່າດ້ວຍຂັ້ນຕອນຂອງ ການປ້ອງກັນ. ໃນນັ້ນ ມີບາງຕອນເວົ້າເຖິງກັບການທົດສອບ ແລະ ການປະເມີນຕັດສິນໃຈໃນທຶນການສຶກສາຂອງທ່ານ. ບາງຕອນເວົ້າເຖິງ ຈະເຮັດແນວໃດໃຫ້ການສຶກສາຂອງທ່ານໄດ້ຮັບ ການພັດທະນາ. ບາງຕອນໄດ້ເວົ້າເຖິງການແກ້ໄຂບັນຫາ ແລະ ປ້ອງກັນສິ່ງທີ່ຜິດພາດ.

## ແມ່ນຫຍັງເປັນການຮັບຮອງ/ເຫັນດີຍິນຍອມ?

ການໃຫ້ການຮັບຮອງ/ເຫັນດີຍິນຍອມ ໝາຍຄວາມວ່າ ທ່ານໄດ້ອະນຸຍາດໃຫ້ສິ່ງໃດໜຶ່ງມາເຮັດໃຫ້ເກີດຜົນຕໍ່ທ່ານ. ຕາມລະບຽບແລ້ວ ຊ່ວງໄວອາຍຸການ ເປັນຜູ້ໃຫຍ່, ໃນປະຈຸບັນທ່ານຢູ່ໃນຊ່ວງສາມາດໃຫ້ສິດທິເພື່ອຈັດແຈ້ງການຍິນຍອມ. ການແຈ້ງໝາຍຄວາມວ່າ ທ່ານຮູ້ດີສິ່ງທີ່ ຈະເກີດກັບທ່ານແລ້ວ ແລະ ສາມາດ ຮັບຮອງສິ່ງດັ່ງກ່າວ. ການແຈ້ງການຍິນຍອມມັນເປັນການສະໝັກໃຈ. ມັນໝາຍຄວາມວ່າ ຄົນອື່ນບໍ່ສາມາດ ເຮັດໃຫ້ທ່ານຕັດສິນໃຈແທນ ໃນສິ່ງທີ່ທ່ານບໍ່ຢາກເຮັດ.

## ແມ່ນຫຍັງເປັນການປະເມີນທົດສອບສິດທິ?

ທ່ານແມ່ນຄົນທີ່ຮັບຜິດຊອບເພື່ອຮັບປະກັນໃນການສຶກສາໃຫ້ດີທີ່ສຸດ ບາງຄັ້ງກໍ່ເປັນວ່າທ່ານໄດ້ໄປຮຽນຕາມສິ່ງທີ່ຕ້ອງການຍ້ອນທ່ານ ສອບເສັງໄດ້ດີທີ່ສຸດ. ເພາະການສຶກສານັ້ນອາດສາມາດຊ່ວຍທ່ານໄດ້, ບໍ່ເໝືອນຄົນອື່ນໆ. ຈົ່ງຈື່ໄວ້ວ່າ, ສິດທິເຫຼົ່ານີ້ແມ່ນຜ່ານການປະເມີນທົດສອບ ນັ້ນກໍ່ເປັນການຕັດສິນໃຈວ່າທ່ານມີ ຄວາມພິເສດຫຍັງຕໍ່ກັບທຶນການສຶກສາດັ່ງກ່າວ, ມັນບໍ່ແມ່ນໄປສອບເສັງແບບທົ່ວໄປໃນຫ້ອງຮຽນ.

- ທ່ານມີສິດທິໃນການທົດສອບ ຫຼື ການປະເມີນຜົນທີ່ຊັດເຈນຢ່າງສະເໝີພາບ ແລະ ບໍ່ເປັນການຕໍ່ຕ້ານຍ້ອນວ່າມາຈາກການແຂ່ງຂັນ, ວັດທະນະທໍາ, ເພດ ໄວ ຫຼື ຂາດຄວາມສາມາດ.
- ທ່ານໄດ້ຮັບສິດທິໃນການສອບເສັງໃນບົດສອບທີ່ເຂັ້ມແຂງ, ໄດ້ຝຶກອົບຮົມຈາກຄົນອື່ນແລ້ວຈຶ່ງນໍາໃຊ້ມາສອບເສັງ, ແລະ ນໍາໃຊ້ໃຫ້ຖືກຕ້ອງ
- ທ່ານໄດ້ຮັບສິດທິໃນການເຂົ້າຮ່ວມສອບເສັງເປັນທີມມີການນໍາພາໃນການສອບເສັງ ແລະ ຕັດສິນໃຈໃນຜົນໄດ້ຮັບ.
- ທ່ານໄດ້ຮັບສິດທິໃນການໄດ້ຮັບເອກະສານສໍາຮອງໃນການລາຍງານຂອງບົດການປະເມີນຜົນ ກ່ຽວກັບຄວາມນະສົມບັດທີ່ຈະໄດ້ຮັບບໍລິການນັ້ນ.
- ທ່ານໄດ້ຮັບຂໍ້ມູນເອກະສານອື່ນໆທີ່ໄດ້ສອບເສັງ ແລະ ໄດ້ປະເມີນຜົນເປັນທີມນັ້ນ.
- ທ່ານອາດຈະໄດ້ມອບ ຫຼື ຍົກເລີກການຍິນຍອມຜົນໄດ້ຮັບແຕ່ລະບົດສອບເສັງທີ່ກ່ຽງຂ້ອງທຶນການສຶກສາຂອງກັບຕົວທ່ານ
- ທ່ານໄດ້ຮັບສິດທິເພື່ອຂໍຮ້ອງໃນການປະເມີນຜົນຄືນ (ເພື່ອສອບເສັງຄືນໃຫ້ສໍາເລັດ)

ແນວຄວາມຄິດສ່ວນບຸກຄົນ ມັນຍັງເປັນສ່ວນໜຶ່ງທີ່ສໍາຄັນໃນກົດໝາຍ. ສ່ວນບຸກຄົນໝາຍຄວາມວ່າ ການຕັດສິນໃຈຕ່າງໆຂອງທ່ານໃນທຶນການ ສຶກສາຂອງທ່ານ ເພື່ອເປັນພື້ນຖານຕໍ່ຕົວທ່ານ. ຄວາມຢາກໄດ້ຂອງທ່ານ. ຄວາມຕ້ອງການຂອງທ່ານ. ຄວາມມັກຂອງທ່ານ.

## IEP ແມ່ນຫຍັງ?

IEP ໝາຍຄວາມວ່າ *ທຶນການສຶກສາສ່ວນຕົວ.* ນັກຮຽນແຕ່ລະຄົນໄດ້ຮັບການບໍລິການຂອງ IDEA ກໍ່ຕ້ອງໄດ້ຮັບ IEP. IEP ໄດ້ຂຽນແຜນການຂຶ້ນມາ ເພື່ອອະທິບາຍກ່ຽວກັບທຶນການສຶກສາພິເສດຂອງທ່ານ. IEP ຈັດລຽງລໍາດັບເປົ້າໝາຍທີ່ທ່ານຈະເຮັດ, ສະໜັບສະໜູນ ຄວາມຕ້ອງການຂອງທ່ານໃຫ້ບັນລຸເປົ້າໝາຍ , ແລະ ຜູ້ທີ່ຮັບຜິດຊອບຄວາມຊ່ວຍເຫຼືອແກ່ທ່ານ.

IEP ຂອງທ່ານແມ່ນໄດ້ປັບປຸງໃນທຸກໆລະປີ ໃນການກອງປະຊຸມຂອງ IEP ໂດຍຄວາມຮຽກຮ້ອງຕ້ອງການທາງກົດໝາຍ. ສະນັ້ນ, ທ່ານມີສິດທິ (ແລະ ຄວາມຮັບຜິດຊອບ) ໃນການວາງແຜນທຶນການສຶກສາຂອງທ່ານ. ມີສິດທິໃນການຖາມໃນເວລາປະຊຸມ IEP ທຸກເວລາຫາກ ທ່ານເຫັນວ່າ IEP ບໍ່ເຮັດວຽກ. ໃນນັ້ນ ມີຂໍ້ມູນຢ່າງຫຼວງຫຼາຍໃນຄວາມຕ້ອງຂອງທ່ານລວມທັງ IEP ຂອງທ່ານ. ບາງຢ່າງເຫຼົ່ານີ້ລວມຢູ່ໃນລຸ່ມນີ້:

- ຂໍ້ມູນຂ່າວສານກ່ຽວກັບການສຶກສາທີ່ທ່ານຕ້ອງການ
- ຂີດເຂດຂອງເປົ້າໝາຍ
- ການບໍລິການ ແລະ ການສະໜັບສະໜູນ ທ່ານຕ້ອງເປັນຜູ້ວາງແຕ່ລະລໍາດັບຄວາມຕ້ອງການຂອງທ່ານ
- ບ່ອນທີ່ທ່ານຈະໄດ້ຮັບການບໍລິການດ້ານການສຶກສາຂອງທ່ານ

- ໃນເວລາທີ່ທາງການບໍລິການຈະສະຫນອງໃຫ້, ຂໍ້ມູນກ່ຽວກັບການປ່ຽນແປງການບໍລິການ

ມັນມີຫຼາຍສິ່ງຫຼາຍຢ່າງລວມທັງ IEP. ຈົ່ງຈື່ໄວ້ວ່າ, ທ່ານເປັນຜູ້ຮັບຜິດຊອບເພື່ອແນໃຈວ່າພວກເຂົາຢູ່ທີ່ນັ້ນ ເພື່ອເຮັດໃຫ້ທ່ານສາມາດໄດ້ຮັບ ການສຶກສາທີ່ດີ. ຖາມອາຈານ ຫຼື ພໍ່ແມ່ຂອງທ່ານຫາກຕ້ອງການຂໍ້ມູນເພີ່ມເຕີມ.

ທີມງານ IEP ແມ່ນກຸ່ມຄົນໃດໜຶ່ງ, ຄືດັ່ງຄູອາຈານຂອງທ່ານ, ຄົນອື່ນໆທີ່ມາຈາກລະບົບຂອງໂຮງຮຽນ, ຄົນທີ່ເຮັດວຽກໃນການບໍລິການ ຄົນຜູ້ໃຫຍ່ ແລະ ໝູ່ເພື່ອນຂອງທ່ານ ແລະ ຄອບຄົວ, ຜູ້ທີ່ສາມາດໃຫ້ການຕັດສິນໃຈກ່ຽວກັບການສຶກສາ IEP. ທ່ານມີສິດທີ່ຈະເຊື້ອເຊີນພໍ່ແມ່, ໝູ່ເພື່ອນຂອງທ່ານ, ຄອບຄົວຂອງສະມາຊິກອື່ນໆ, ນາຍຈ້າງ ຫຼື ຜູ້ຈັດການການບໍລິການຂອງທ່ານ, ຫຼື ຄົນອື່ນໆ ທີ່ທ່ານຄິດວ່າ ຈະມາຊ່ວຍໃນ ການຕັດສິນໃຈກ່ຽວກັບການສຶກສາຂອງທ່ານ. ທ່ານມີສິດທີ່ຈະເຂົ້າເປັນສະມາຊິກທີ່ເທົ່າທຽມກັນຂອງທີມງານ IEP ຂອງທ່ານ.

## ສິດທິອື່ນໆທີ່ທ່ານມີກ່ຽວຂ້ອງກັບທຶນການສຶກສາຂອງທ່ານ ມີຫຍັງແດ່?

ທ່ານມີສິດທິພິເສດໃນການອອກແບບທິດທາງ, ສະຫນັບສະຫນູນການບໍລິການ (ການເວົ້າອອກ ແລະ ພາສາ, ອາຊີບ ຫຼື ການສຶກສາ ທັງກາຍ ແລະ ໃຈ, ການປັບຕົວຕໍ່ການສຶກສາ, ແລະ ອື່ນໆ), ແລະ ການບໍລິການທີ່ກ່ຽວຂ້ອງ ທີ່ຕ້ອງການເພື່ອແນ່ໃຈວ່າ ທ່ານຈະກ້າວໄປສູ່ເປົ້າໝາຍໄດ້ສູງສຸດ ປະຈຳສົກປີການສຶກສາ IEP ຂອງທ່ານ.

ທ່ານມີສິດທິ ໃນການສະຫນັບສະຫນູນ ເພື່ອຊ່ວຍໃຫ້ທ່ານຮຽນຮູ້ໃນສິ່ງທີ່ຜົນດີ ຖ້າຫາກວ່າທ່ານມີບັນຫາກ່ຽວກັບດ້ານພຶດຕິກຳ.

ທ່ານມີສິດທີ່ຈະມີທີມງານ IEP ພິຈາລະນາຕາມຄວາມຕ້ອງການດ້ານພາສາຂອງທ່ານ ຖ້າຫາກວ່າທ່ານເວົ້າເປັນພາສາທີ່ແຕກຕ່າງກັນ.

ທ່ານມີສິດທີ່ຈະໄດ້ຮັບເຕັກໂນໂລຊີທີຈະມາຊ່ວຍທ່ານ ເພື່ອໃຫ້ໄດ້ຕາມລຳດັບຂອງຄວາມຕ້ອງການຂອງທ່ານ, ລວມທັງຄວາມຕ້ອງການ ໃນການສື່ສານ.

ກົດໝາຍຂອງລັດຍັງຮຽກຮ້ອງວ່າຕັ້ງແຕ່ທ່ານມີອາຍຸ 14 IEP ຂອງທ່ານ ລວມຂໍ້ມູນໃນການບໍລິການ ແລະ ການສະໜັບສະໜູນ ທ່ານຕ້ອງການທີ່ຈະຮຽນຮູ້ ເພື່ອເຮັດແນວໃດໃຫ້ທ່ານໄດ້ໄປຫາສິ່ງທີ່ທ່ານຕ້ອງການໄປ.

## ແມ່ນຫຍັງເປັນການປ່ຽນແປງການບໍລິການ?

ການປ່ຽນແປງມັນເປັນທັກສະຕ່າງໆ ທີ່ຕ້ອງການຢາກໄດ້ວຽກງານທີ່ດີ, ຍ້າຍທ່ານກັບໄປຢູ່ບ້ານທີ່ທ່ານມັກການເຮັດວຽກຢູ່ໃນຊຸມຊົນທີ່ທ່ານມັກ, ແລະ ມັນເປັນສິ່ງທີ່ທ່ານຄວນຈະຮູ້ຫຼັງຈາກທ່ານຮຽນຈົບ.

ການປ່ຽນແປງການບໍລິການ ມັນອີງໃສ່ພື້ນຖານຄວາມຕ້ອງການຂອງທ່ານ, ຄວາມສົນໃຈ ແລະ ຄວາມມັກ. ນັ້ນມັນເປັນສິດທິໜຶ່ງຢູ່ໃນກົດໝາຍ, ແຕ່ວ່າມັນກໍ່ເປັນຄວາມຮັບຜິດຊອບຂອງທ່ານເພື່ອເຮັດແນວໃດໃຫ້ເກີດຜົນເປັນຈິງ!

## ເຕັກໂນໂລຊີຊ່ວຍຫຍັງໄດ້ແດ່?

ເຕັກໂນໂລຊີຊ່ວຍ ແມ່ນເປັນເຄື່ອງມື ຫຼື ບໍລິການທີ່ສາມາດຊ່ວຍໃຫ້ທ່ານໄດ້ຮຽນຮູ້ສິ່ງທີຢູ່ໃນທຶນການສຶກສາຂອງທ່ານ. ມັນກໍ່ເປັນສິ່ງທີ່ທຳມະດາສາມາດຊ່ວຍທ່ານເພື່ອຈັບບິດສໍ, ມັນເປັນເຄື່ອງອັນໜຶ່ງທີ່ສາມາດຜະລິດການປາກເວົ້າໄດ້, ຫຼື ບາງຢ່າງຄ້າຍຄືກັນ.

## ການດຳເນີນການຂອງສິດທິ ແມ່ນຫຍັງ?

ການດຳເນີນການຂອງສິດທິມັນຢູ່ໃນ IDEA ອະນຸຍາດໃຫ້ທ່ານໄດ້ມີສ່ວນຮ່ວມໃນການປະຕິບັດ ຫຼື ການຕັດສິນໃຈກ່ຽວກັບທຶນການສຶກສາຂອງທ່ານ ແລະ ເປັນຂັ້ນຕອນໃນເວລາທີ່ທ່ານບໍ່ເຫັນດີກັບບັນຫາ ຫຼື ການຕັດສິນໃຈເຫຼົ່ານັ້ນ. ມັນຈະໃຫ້ລະອຽດດັ່ງລຸ່ມນີ້

## ແມ່ນຫຍັງ? ທີ່ ທ່ານຄິດວ່າທ່ານມີສິດຕັດສິນໃຈທັງໝົດກ່ຽວກັບ IEP ?

ທ່ານມີສິດທີ່ຈະເປັນສະມາຊິກທີມງານໄດ້. ການຕັດສິນໃຈກ່ຽວກັບການສຶກສາ IEP ຂອງທ່ານແມ່ນເຮັດຮ່ວມກັນກັບສະມາຊິກທັງຫມົດເພື່ອຕົກລົງເຫັນດີ. ນີ້ບໍ່ໝາຍຄວາມວ່າທ່ານໄດ້ຮັບການເຮັດພຽງແຕ່ສິ່ງທີ່ທ່ານຕ້ອງການ! ທາງທີມງານໄດ້ມີຄວາມຮັບຜິດຊອບໃນການວາງແຜນທຶນການສຶກສາໂດຍອີງໃສ່ຄວາມຕ້ອງການ, ບໍ່ພຽງແຕ່ຄວາມສົນໃຈຂອງທ່ານ.

ການດຳເນີນການຕໍ່ສິດທິ ມັນເປັນຕົວທີ່ສ້າງມາເພື່ອປົກປ້ອງສິດທິຂອງທ່ານທີ່ຈະບໍ່ເສຍຄ່າ, ເພື່ອເໝາະສົມກັບການສຶກສາພາກລັດ. ການປົກປ້ອງເຫຼົ່ານີ້ແມ່ນກ່ຽວຂ້ອງກັບສິດທິຕາມທີໄດ້ແຈ້ງການ, ການຍິນຍອມ, ການເຂົ້າເຖິງການບັນທຶກ ແລະ ເປັນຄວາມລັບ.

## ແມ່ນຫຍັງ ເປັນການແຈ້ງເຕືອນ, ຄວາມຍິນຍອມ, ການເຂົ້າເຖິງ ແລະ  ຄວາມໝາຍຂອງຄວາມລັບ?

ພວກເຂົາໄດ້ຈັດປະເພດຂອງສິດທິ ເພື່ອສ້າງໃຫ້ສິດທິເກີດຂຶ້ນ. ພວກເຮົາໄດ້ເວົ້າກ່ຽວກັບສິດທິໃນການຍິນຍອມຂອງທ່ານ ເປັນທີຮຽບຮ້ອຍແລ້ວ.

ທ່ານມີສິດທິໃນການໄດ້ຮັບການແຈ້ງການ ເມື່ອໃດກໍ່ຕາມໂຮງຮຽນມີການປັບປຸງ, ປ່ຽນແປງ ຫຼື ຢຸດຕິການບໍລິການດ້ານການສຶກສາ ຂອງທ່ານ. ແຈ້ງການໝາຍຄວາມວ່າການບອກໃຫ້ທ່ານຮູ້ຈັກ. ໂຮງຮຽນຕ້ອງໄດ້ແຈ້ງໃຫ້ທ່ານຊາບ, ຕາມປົກກະຕິແລ້ວ ຈະສົ່ງຈົດໝາຍຫາທ່ານ, ກ່ຽວກັບສິ່ງຕ່າງໆເຊັ່ນວ່າ ວັນທີ່ມີກອງປະຊຸມ IEP ແລະ ເວລາ ຫຼື ຖ້າຫາກວ່າພວກເຂົາຕ້ອງການຈະເລື່ອນເວລາກອງປະຊຸມ IEP ເພື່ອປ່ຽນ ແປງໃນທຶນການສຶກສາຂອງທ່ານ.

ໂຮງຮຽນຍັງຕ້ອງໄດ້ແຈ້ງໃຫ້ທ່ານຊາບ ເປັນລາຍລັກອັກສອນ ກ່ຽວກັບສິດທິຕ່າງໆ ທີ່ຈະມອບໂອນໃຫ້ແກ່ທ່ານ ໃນເວລາອາຍຸກະສຽງຮອດຄວາມເປັນຜູ້ໃຫຍ່!

ທ່ານມີສິດທີ່ຈະໄດ້ຮັບກາແຈ້ງຊາບຢ່າງງ່າຍດາຍໃນພາສາ, ເປັນພາສາທີ່ທ່ານສາມາດເຂົ້າໃຈໄດ້

ທ່ານມີສິດທີ່ຈະໄດ້ຮັບກາແຈ້ງຊາບຂັ້ນຕອນໃນການປົກປ້ອງຄຸ້ມຄອງທີ່ສະດວກສະບາຍໃຫ້ແກ່ທ່ານ. ຂັ້ນຕອນໃນການປົກປ້ອງຄຸ້ມຄອງ ໝາຍຄວາມວ່າ ທ່ານຈະນໍາໃຊ້ເພື່ອປົກປັກຮັກສາສິດທິຂອງທ່ານທີ່ຈະບໍ່ເສຍຄ່າ, ເໝາະສົມກັບການສຶກສາສາຂອງພາກລັດ. ການແຈ້ງການດັ່ງກ່າວ ຈະປະກອບມີຂໍ້ມູນກ່ຽວກັບສິດທິທັງຫມົດທີ່ຢູ່ໃນ IDEA.

ທ່ານຍັງໄດ້ຮັບສິດທິໃນການເຂົ້າໄປໃນລະບົບບັນທຶກຂໍ້ມູນຂອງທ່ານຢູ່ໃນໂຮງຮຽນ. ມັນໝາຍຄວາມວ່າ ທ່ານມີສິດທິໃນການເຂົ້າໄປຊອກ ຫາຕົວເອກະສານຂອງທ່ານທີ່ໂຮງຮຽນຮອບຮອມບັນທຶກໄວ້. ຖ້າວ່າທ່ານບໍ່ໄດ້ຮັບການລາຍງານ, ທ່ານຈະມີສິດທິໄດ້ຮັບເອກະສານສະບັບສໍາເນົາ. ການບັນທຶກນີ້ອາດຈະລວມທັງການສອບເສັງ, ໃໝ່ ແລະ ເກົ່າຂອງ IEPs, ລາຍງານ, ແລະ ຂໍ້ມູນອື່ນທີ່ໂຮງຮຽນໄດ້ຈັດວາງໄວ້ໃນດ້ານການບໍລິ ການການສຶກສາ.

ເຊັ່ນດຽວກັນທ່ານຈະໄດ້ເຂົ້າໄປໃນບ່ອນບັນທຶກດັ່ງກ່າວ, ທ່ານມີສິດທິໃນຄວາມລັບຕໍ່ກັບເອກະສານບັນທຶກທີ່ໄດ້ບັນທຶກນັ້ນ. ຄວາມລັບໝາຍຄວາມວ່າຄວາມເປັນສ່ວນຕົວ. ທ່ານໄດ້ຮັບສິດທິເພື່ອໃຫ້ໂຮງຮຽນບັນທຶກໄວ້ເປັນຄວາມລັບ ແລະ ບໍ່ສະດວກໃຫ້ແກ່ຄົນອື່ນນອກ ຈາກໄດ້ຮັບອະນຸຍາດ ຢ່າງໜ້ອຍພວກເຂົາເຈົ້ານັ້ນເຮັດວຽກໃນໂຮງຮຽນ ແລະ ມີຄວາມຕ້ອງການເອກະສານດັ່ງກ່າວໄປນໍາໃຊ້ການບໍລິການ ການສຶກສາ. ພໍ່ແມ່ຂອງທ່ານກໍ່ມີສິດທິໃນການເຂົ້າຫາເອກະສານບັນທຶກຂອງທ່ານ ຖ້າທ່ານຕ້ອງການຮຽກຮ້ອງລາຍຮັບທາງພາສີໃດໜຶ່ງ ຂອງພະແນກ.

## ຈະເປັນແນວໃດໃນການດໍາເນີນສິດທິ ຖ້າຫາກທ່ານບໍ່ເຫັນດີກັບການຕັດສິນຂອງທີມງານ?

ທ່ານອາດມີທາງເລືອກ ຫາກທ່ານບໍ່ເຫັນດີກັບການຕັດສິນໃຈໃນການກໍານົດ, ການປະເມີນຜົນ(ການປະເມີນທົດສອບ) , ສອບເສັງ ຫຼື ການຈັດແບ່ງຂອງ FAPE. ໃນບັນດາສິດທິ, ທ່ານມີສິດທິພິຈາລະນາຢູ່ຕໍ່ໜ້າຄະນະກໍາມະການຜູ້ພິພາກສາກົດໝາຍ; ສິດໃນການໄກ່ເກ່ຍ, ໂອກາດໃນການຕໍ່ລອງໃນຂົງເຂດຂອງການສຶກສາ ເພື່ອແກ້ໄຂບັນຫາຄໍາຮ້ອງທຸກຂອງທ່ານ ແລະ ສິດທີ່ຈະຍື່ນຄໍາຮ້ອງຮຽນກັບພະແນກສຶກສາ ຂອງລັດໄອໂອວາ.

ຂັ້ນຕອນເຫຼົ່ານີ້ ເຊື່ອໝັ້ນວ່າທ່ານສາມາດປະທ້ວງການກະທໍາຂອງໂຮງຮຽນ. ບໍ່ໝາຍຄວາມວ່າເຈົ້າເຮັດເພື່ອໃຫ້ເຈົ້າໄດ້ໄຊຊະນະ. ຂັ້ນຕອນເຫຼົ່ານີ້ມັນໜັກໜ່ວງສໍາລັບທຸກຄົນ. ເຫດຜົນນັ້ນ, ຄົນສ່ວນໃຫຍ່ໃຊ້ທາງເລືອກນີ້ໃນເມື່ອເຂົາເຈົ້າບໍ່ເຂົ້າໂຮງຮຽນ ແລະ ທີມງານຂອງ IEP ຈະເປັນຜູ້ເຂົ້າຮ່ວມໃນການແກ້ໄຂບັນຫາ.

## ແມ່ນແລ້ວ ອັນນີ້ເປັນວຽກທີ່ໜັກໜ່ວງ.

ອັນນີ້ແມ່ນວຽກທີ່ໜັກໜ່ວງ. ໂຊກດີວ່າມີຫຼາຍຄົນທີ່ສາມາດຊ່ວຍເຫຼືອທ່ານ. ທ່ານມີຄູອາຈານຜູ້ທີ່ຢາກຮ່ວມງານກັບທ່ານ ເພື່ອອອກແບບການສຶກສາໃຫ້ເໝາະສົມກັບທ່ານ. ທ່ານຍັງມີທີມ IEP ເຮັດວຽກຢ່າງໃກ້ຊິດກັບທ່ານເພື່ອໃຫ້ທ່ານໄດ້ຮັບຮູ້ສິດທິ ແລະ ຄວາມຮັບຜິດຊອບຂອງຕົວທ່ານເອງ ທໍານອງດຽວກັນນີ້ ເພາະທ່ານມີສິດເຫຼົ່ານີ້, ບໍ່ໝາຍຄວາມວ່າພໍ່ແມ່ຂອງທ່ານຈະປ່ອຍປະລະເລີຍ ພວກເຂົາເຈົ້າ ກໍ່ຍັງຈະຍືນຄຽງຂ້າງກັບທີມ IEP  ຖ້າຫາກທ່ານ ຫຼື ທາງໂຮງຮຽນຮຽນເຊີນພວກເຂົາເຈົ້າເຂົ້າຮ່ວມ. ມັນຈະບັນຫາດີ ທີ່ຕ້ອງເອົາພວກເຂົາເຈົ້າເຂົ້າໃນຄະນະກາມະການເພື່ອການຊ່ວຍໃຫ້ທ່ານຮຽນຮູ້ໃນຄວາມເປັນຜູ້ໃຫຍ່.

ທັງໝົດນີ້ ເຊື່ອໝັ້ນວ່າທ່ານໄດ້ມີໂອກາດໄດ້ພົບກັບການສຶກສາທີ່ທ່ານຕ້ອງການ. ດຽວນີ້ທ່ານເຫັນວ່າຄົນອື່ນເຂົາຫາເຮັດວຽກໃນທຸກໆປີ! ມັນເປັນຄວາມຈິງ, ມັນເປັນວຽກງານໜັກ. ແຕ່ມັນຄຸ້ມຄ່າ. ມັນແມ່ນອະນາຄົດຂອງທ່ານທັງໝົດ, ແມ່ນບໍ?

## ຕົວຫຍໍ້ ແລະ ຄໍາອະທິບາຍສັບ

**FAPE** (ເໝາະສົມມີອິດສະຫຼະການຮຽນພາກລັດ) - ສິດທິພາຍໃຕ້ IDEA ສໍາລັບສະໜັບສະໜູນ ແລະ ບໍລິການທີ່ທ່ານຈໍາເປັນຕ້ອງໄດ້ຮັບ ປະໂຫຍດຈາກໂຮງຮຽນ, ໂດຍຕົວທ່ານ ຫຼື ຄອບຄົວບໍ່ໄດ້ເສຍຄ່າ.

**ອາຍຸກະສຽງເປັນຜູ້ໃຫຍ່** - ອາຍຸຮອດ 18ປີ, ຫຼື ກໍລະນີພິເສດເຊັ່ນທ່ານແຕ່ງງານ ທ່ານໄດ້ຮັບສິດທິໂດຍທາງລັດໄອໂອວາໃຫ້ສິດທັງກົດໝາຍ.

**IDEA** (ກົດໝາຍການສຶກສາວ່າດ້ວຍຄົນພິການ) - ກົດໝາຍທີ່ໃຫ້ການສຶກສາແບບພິເສດ. ມັນທັງຊ່ວຍກໍານົດສິດທິການສຶກສາຂອງທ່ານ ແລະ ຂັ້ນຕອນທີ່ທັງໂຮງຮຽນຈະຕ້ອງປະຕິບັດຕາມ.

**ສິດທິ** - ຄວາມເປັນທໍາທີ່ກົດໝາຍກໍານົດໄວ້.

**ຄວາມຮັບຜິດຊອບ** - ສິ່ງທີ່ທ່ານຕ້ອງເຮັດເພື່ອໃຫ້ທ່ານໄດ້ຮັບຜົນປະໂຫຍດ ຫຼື ຮັກສາສິດທິຂອງທ່ານ.

**ການດໍາເນີນ -** ປະຕິບັດຕາມຂັ້ນຕອນ ຖ້າທ່ານ ແລະ ທີມງານ IEP ຂອງທ່ານບໍ່ເຫັນດີໃນຄວາມຕ້ອງການຂອງທ່ານ

**ການແຈ້ງການຍິນຍອມ -** ການເຂົ້າໃຈທີ່ທ່ານໄດ້ເຫັນດີເພື່ອຈະເຮັດ ຫຼື ເຮັດໃຫ້ສໍາເລັດ.

**ທຶນການສຶກສາສ່ວນບຸກຄົນ -** ມັນເວົ້າເຊັ່ນດຽວກັນກັບ IEP. ມັນເປັນຂັ້ນຕອນທີ່ໂຮງຮຽນເຂົາຈັດວາງໄວ ແລະ ແມ່ນຫຍັງທີ່ຈະເຮັດໃຫ້ຊຸມປີຕໍ່ໄປ.

**ການປ່ຽນແປງ -** ຂັ້ນຕອນນີ້ແມ່ນຢາກໃຫ້ສິດທິຂອງທ່ານ ໄດ້ຮັບການຊ່ວຍເຫຼືອຈາກໂຮງຮຽນ ເພື່ອກະກຽມວຽກໃຫ້ທ່ານ, ການສຶກສາ ແລະ ສະຖານທີ່ທີ່ທ່ານຕ້ອງການໄປຢູ່ອາໃສຫຼັງຈາກທ່ານຮຽນຈົບ.

**ເທັກໂນໂລຊີທີ່ມີຄວາມອ່ອນໄຫວ** - ນີ້ໝາຍເຖິງອຸປະກອນ ຫຼື ການບໍລິການ, ຫຼື ທັງສອງຢ່າງ, ທີ່ທ່ານຈໍາເປັນຕ້ອງມີເພື່ອຜົນປະໂຫຍດໃນການ ສຶກສາຂອງທ່ານ.